ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດທະນະຖາວອນ

ແຂວງອັດຕະປື

ເລກທີ...06.../ຈຂ.ອປ
ອັດຕະປື, ວັນທີ 08 ມີດສະພາ 2025

# ຄໍາສັ່ງ
## ວ່າດ້ວຍ ການຕິດຕາມ, ກວດກາ ແລະ ການແກ້ໄຂບັນຫາຂຸດຄົ້ນແຮ່ຄໍາຕົກຂ້ອນ, ຫີນແຮ່-ຊາຍ ຕາມບັນດາສາຍນໍ້າລໍາເຊ, ຫ້ວຍນໍ້າ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດທົ່ວແຂວງອັດຕະປື

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ທີ່ລະບຸໄວ້ໃນໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ( ສະບັບປັບປຸງ ) ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 7/3/2025 ວ່າດ້ວຍການຕິດຕາມ, ກວດກາ ແລະ ແກ້ໄຂບັນຫາແຮ່ຄໍາຕົກຂ້ອນ, ຫີນ ແລະ ຊາຍ ຕາມບັນດາສາຍນໍ້າ, ຮ່ອງຫ້ວຍ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດທົ່ວປະເທດ;

ເພື່ອເພີ່ມທະວີໃນການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາການພັດທະນາແຮ່ທາດຕ່າງໆ, ລວມທັງແຮ່ຄໍາຕົກຂ້ອນ, ການດູດຫີນແຮ່ ແລະ ຊາຍ ໃນຂອບເຂດທົ່ວແຂວງອັດຕະປື ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ກໍານົດອອກໃນແຕ່ລະໄລຍະ.

## ເຈົ້າແຂວງອອກຄໍາສັ່ງ:

1. ໃຫ້ຢຸດຕິຢ່າງຖາວອນ ໃນການອອກອະນຸຍາດ ໃຫ້ຂຸດຄົ້ນແຮ່ຄໍາຕົກຂ້ອນ ແລະ ຂຸດຄົ້ນຫີນແຮ່-ຊາຍ ທີ່ຕິດພັນກັບແຮ່ຄໍາຕົກຂ້ອນທຸກຮູບແບບໃນຂອບເຂດທົ່ວແຂວງອັດຕະປື ໃຫ້ພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ອົງການປົກຄອງເມືອງ 5 ເມືອງ ຈັດຕັ້ງປະຕິບັດ ດັ່ງນີ້:

1) ຫ້າມບໍ່ໃຫ້ບັນດາພະແນກການ, ກອງບັນຊາການ ປກຊ - ປກສ ແລະ ອົງການປົກຄອງເມືອງ 5 ເມືອງ ໃນແຂວງອັດຕະປື ສ້າງເງື່ອນໄຂທີ່ເປັນຊ່ອງວ່າງ ໃນທຸກຮູບແບບ ທີ່ອໍານວຍຄວາມສະດວກ ໃຫ້ແກ່ການຂຸດຄົ້ນແຮ່ຄໍາຕົກຂ້ອນ, ຢູ່ເຂດຫ່າງໄກສອກຫຼີກ, ໃນເຂດອ່າງນໍ້າທີ່ເປັນໂຄງການພັດທະນາທີ່ນໍ້າຈະຖ້ວມ, ສ້າງເປັນໂຄງການພິເສດ, ລວມທັງການດູດຫີນແຮ່ ແລະ ຊາຍ ທີ່ນໍາໃຊ້ຕະແກງ, ກົນຈັກ, ໂຕະຮ່ອນ, ເຄື່ອງມື ແລະ ອຸປະກອນຕ່າງໆ ຕາມແຄມສາຍນໍ້າ,ແມ່ນໍ້າລໍາເຊ, ຫ້ວຍນໍ້າຕ່າງໆ ເພື່ອຈຸດປະສົງຄັດຈ້ອນເອົາແຮ່ຄໍາຕົກຂ້ອນ ຢ່າງເດັດຂາດ;

2) ໃຫ້ກວດກາ ແລະ ປະຕິບັດມາດຕະການ ຢ່າງເຂັ້ມງວດ ຕໍ່ບຸກຄົນ ແລະ ຜູ້ປະກອບການ ທີ່ມີການລັກລອບຂຸດຄົ້ນແຮ່ຄໍາຕົກຂ້ອນ, ການດູດຫີນແຮ່ ແລະ ຊາຍໃນທຸກກໍລະນີ ( ທີ່ເປັນການສວຍໂອກາດຄັດຈ້ອນເອົາແຮ່ຄໍາ ) ໃນຂອບເຂດທົ່ວແຂວງ;

3) ພົວພັນ ແລະ ປະສານສົມທົບກັບສູນກາງ ເພື່ອຕິດຕາມ ກວດກາ ແລະ ປະເມີນຄືນໂຄງການຂຸດຄົ້ນແຮ່ຄຳ ແບບທົດລອງ ຢູ່ໃນແຂວງອັດຕະປື ຕາມການອະນຸຍາດຂອງລັດຖະບານ ໃນໄລຍະທີ່ຜ່ານມາ ເພື່ອຫັນໂຄງການທົດລອງ ກ້າວໄປສູ່ການຈັດຕັ້ງປະຕິບັດ ຕາມກົນໄກປົກກະຕິ ໃຫ້ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍກຳນົດໄວ້ ແລະ ແຈ້ງການ ເລກທີ 978/ຫສນຍ, ລົງວັນທີ 22 ພຶດສະພາ 2024 ຢ່າງເຂັ້ມງວດ; ໂດຍສະເພາະ ກ່ອນບໍລິສັດຈະດຳເນີນການສືບຕໍ່ຂຸດຄົ້ນ ແລະ ປຸງແຕ່ງ ໃຫ້ບໍລິສັດ ເຮັດສຳເລັດວຽກງານການສຳຫຼວດແຮ່ທາດ, ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຢ່າງລະອຽດຄົບຖ້ວນສາກ່ອນ ຈຶ່ງໃຫ້ນຳສະເໜີຕໍ່ລັດຖະບານ ແລະ ກະຊວງທີ່ກ່ຽວຂ້ອງ ອອກໃບອະນຸຍາດຂຸດຄົ້ນໃຫ້ບໍລິສັດ. ພ້ອມກັນນັ້ນ, ກໍໃຫ້ຢຸດຕິການພິຈາລະນາ ຕໍ່ກໍລະນີຍ້າຍ ຫຼື ປ່ຽນແທນເນື້ອທີ່ບ່ອນອື່ນໆ ມາແທນໂຄງການສຳປະທານແຮ່ທົດລອງ ຢູ່ໃນຂອບເຂດແຂວງອັດຕະປື ຢ່າງເດັດຂາດ;

2. ໃຫ້ໂຈະການຄົ້ນຄວ້າພິຈາລະນາ ແລະ ນຳສະເໜີໂຄງການຊອກຄົ້ນ, ສຳຫຼວດແຮ່ທາດໃໝ່ ສຳລັບໝວດແຮ່ທາດໂລຫະ ຈົນໝົດສະໄໝລັດຖະບານ ຊຸດທີ IX, ຍົກເວັ້ນບາງໂຄງການມີການຕົກລົງຂອງຂັ້ນເທິງ ທີ່ເປັນອັນສະເພາະ ແລະ ໂຈະຊົ່ວຄາວການພິຈາລະນາອອກອະນຸຍາດໂຄງການສຳຫຼວດແຮ່ທາດອະໂລຫະໃໝ່ ສຳລັບຂັ້ນແຂວງ ຈົນກວ່າຈະມີແຈ້ງການໃໝ່ໃຫ້ສືບຕໍ່; ສ່ວນໂຄງການທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແລະ ອົງການປົກຄອງແຂວງ ໃນໄລຍະທີ່ຜ່ານມາ ມອບໃຫ້ບັນດາພະແນກການກ່ຽວຂ້ອງຂອງແຂວງ ແລະ ອົງການປົກຄອງເມືອງ ເອົາໃຈໃສ່ປະຕິບັດ ດັ່ງນີ້:

1) ເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ຕິດຕາມ, ກວດກາໂຄງການສຳຫຼວດ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃຫ້ໄປຕາມສັນຍາ, ຕາມຂັ້ນຕອນ, ແຜນການ,ມາດຖານເຕັກນິກ-ວິຊາການ, ລະບຽບການ ແລະ ສອດຄ່ອງກັບກົດໝາຍກ່ຽວຂ້ອງວາງອອກຢ່າງເຂັ້ມງວດ;

2) ເພີ່ມຄວາມເຂັ້ມງວດຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແກ້ໄຂບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການສຳຫຼວດ, ຊອກຄົ້ນ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນຂອບເຂດແຂວງອັດຕະປື ໃຫ້ປະຕິບັດຕາມມາດຕະການທີ່ໄດ້ກຳນົດໄວ້ໃນແຜນຄຸ້ມຄອງ, ຕິດຕາມ ແລະ ກວດກາສິ່ງແວດລ້ອມ ຂອງແຕ່ລະໂຄງການ ຕາມການຮັບຮອງຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເຂັ້ມງວດ;

3) ເພີ່ມຄວາມເຂັ້ມງວດ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການຂົນສົ່ງແຮ່ທາດ ໂດຍສະເພາະການຄຸ້ມຄອງນ້ຳໜັກໃນລົດບັນທຸກປະເພດຕ່າງໆ ແລະ ການປະກອບສ່ວນພັນທະດ້ານງົບປະມານ ເພື່ອບູລະນະຮັກສາ, ສ້ອມແປງ ແລະ ຍົກລະດັບເສັ້ນທາງແຕ່ລະປະເພດ ໂດຍໃຫ້ປະຕິບັດຕາມຂໍ້ກຳນົດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກຢ່າງເຂັ້ມງວດ;

3. ເຫັນດີແຕ່ງຕັ້ງຄະນະສະເພາະກິດຂັ້ນແຂວງ ປະກອບມີບັນດາພະແນກການກ່ຽວຂ້ອງຂອງແຂວງ, ເມືອງ ແລະ ເຈົ້າໜ້າທີ່ ປກຊ - ປກສ ເຮັດໜ້າທີ່ສຶກສາອົບຮົມການເມືອງແນວຄິດ, ຊີ້ແຈງຜົນໄດ້ຜົນເສຍ ແລະ ຜົນກະທົບຕໍ່ຊີວິດ ແລະ ສັບສິນຂອງເຂົາເຈົ້າ, ຊີ້ແຈງເຖິງຄວາມບໍ່ສະຫງົບ ແລະ ບັນຫາຄວາມໝັ້ນຄົງຕໍ່ປະເທດຊາດບ້ານເມືອງ, ດຳເນີນການສະກັດກັ້ນການລັກລອບຂຸດຄົ້ນແຮ່ທາດ ໃນຂອບເຂດທົ່ວແຂວງອັດຕະປື ແລະ ເປັນເຈົ້າການໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຕາມການມອບໝາຍ ດ້ວຍຄວາມຮັບຜິດຊອບສູງ; ເປັນຕົ້ນແມ່ນການຕິດຕາມ, ກວດກາ ແລະ ແກ້ໄຂບັນຫາການລັກລອບຂຸດຄົ້ນແຮ່ຄຳຕົກຂ້ອນ, ຫີນປະໂກດ, ຫີນແຮ່ ແລະ ຊາຍຕາມບັນດາສາຍນ້ຳ, ຮ່ອງຫ້ວຍທີ່ຕິດພັນກັບຄຳຕົກຂ້ອນ ແລະ ຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດທົ່ວແຂວງໃຫ້ມີຄວາມສະຫງົບ. ພ້ອມກັນນັ້ນ, ກໍ່ໃຫ້ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານສຳຫຼວດ, ຊອກຄົ້ນ ຂອງບັນດາບໍລິສັດ ແລະ ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດແບບທົດລອງ ຂອງບັນດາບໍລິສັດ ທີ່ໄດ້ຮັບອະນຸຍາດ ຈາກລັດຖະບານ ແລະ ອົງການປົກຄອງແຂວງ ໃນໄລຍະທີ່ຜ່ານມາ ໃຫ້ຖືກຕ້ອງຕາມຂອບເຂດຈຸດທີ່ຕັ້ງ ແລະ ຖືກຕ້ອງຕາມສັນຍາທີ່ກຳນົດໄວ້; ໃນກໍລະນີຄະນະສະເພາະກິດກວດກາພົບເຫັນບຸກຄົນ ຫຼື ບໍລິສັດ ມີການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ບໍ່ຖືກຕ້ອງຕາມຂອບເຂດ ແລະ ສັນຍາທີ່ໄດ້ກຳນົດໄວ້ ແມ່ນໃຫ້ນຳໃຊ້ມາດຕະການຢ່າງເດັດຂາດເຂັ້ມງວດ ຕໍ່ຜູ້ລະເມີດ ຕາມດຳລັດ 373/ລບ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

**4. ມາດຕະການຈັດຕັ້ງປະຕິບັດ**

1) ມອບໃຫ້ຄະນະສະເພາະກິດ ສະກັດກັ້ນການລັກລອບຂຸດຄົ້ນແຮ່ທາດ ໃນຂອບເຂດທົ່ວແຂວງອັດຕະປື ຈັດຕັ້ງຜັນຂະຫຍາຍຄຳສັ່ງ ເລກທີ 06/ນຍ, ຄຳສັ່ງຂອງເຈົ້າແຂວງສະບັບນີ້ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ໃຫ້ເລິກເຊິ່ງທົ່ວເຖິງກຸ່ມເປົ້າໝາຍ ໃນແຕ່ລະເມືອງ, ແຕ່ລະບ້ານ ແລະ ຕະຫຼອດປະຊາຊົນບັນດາເຜົ່າ ໃຫ້ມີຄວາມຮັບຮູ້ເຂົ້າໃຈ ແລະ ມີຄວາມເປັນເອກະພາບສູງ ໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ;

2) ມອບໃຫ້ພະແນກພາຍໃນແຂວງ ປະສານສົມທົບກັບອົງການປົກຄອງເມືອງ ໃນການຄົ້ນຄວ້າປັບປຸງກົດລະບຽບບ້ານ ໂດຍບັນຈຸຫົວຂໍ້ວຽກງານຕິດຕາມ, ກວດກາ ແລະ ແກ້ໄຂບັນຫາການລັກລອບຂຸດຄົ້ນແຮ່ຄຳເຄົ້າ, ຄຳຕົກຂ້ອນ, ຫີນປະໂກໄດ, ແຮ່ທາດອື່ນໆ, ຫີນແຮ່-ຊາຍ ຕາມບັນດາສາຍນ້ຳ, ຮ່ອງຫ້ວຍ ເຂົ້າໃນກົດລະບຽບຂອງບ້ານຕື່ມອີກ, ໂດຍສະເພາະບ້ານເປົ້າໝາຍທີ່ມີການຈັດຕັ້ງປະຕິບັດໂຄງການສຳຫຼວດ, ຊອກຄົ້ນ ແລະ ຂຸດຄົ້ນແຮ່ທາດ ຢູ່ໃນແຕ່ລະເມືອງ;

3) ໃຫ້ອົງການປົກຄອງເມືອງ ແລະ ອົງການຈັດຕັ້ງຂັ້ນບ້ານ ຍົກສູງຄວາມຮັບຜິດຊອບ ໃນການເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານຕິດຕາມ, ກວດກາ ແລະ ແກ້ໄຂບັນຫາການລັກລອບແຮ່ຄຳຕົກຂ້ອນ, ແຮ່ທາດອື່ນໆ ຫີນ ແລະ ຊາຍ ຕາມບັນດາສາຍນ້ຳ, ຮ່ອງຫ້ວຍ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍຖືເອົາການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ອົງການຈັດຕັ້ງ ແລະ ປະຊາຊົນບັນດາເຜົ່າ ມີຄວາມຮັບຮູ້ເຂົ້າໃຈ ແລະ ມີຄວາມເປັນເອກະພາບສູງ ໃນການຈັດຕັ້ງປະຕິບັດຄຳສັ່ງ ຂອງຂັ້ນເທິງວາງອອກ ຢ່າງເຂັ້ມງວດ;

4) ໃຫ້ພະແນກກະສິກຳ ແລະ ປ່າໄມ້, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກພະລັງງານ ແລະ ບໍ່ແຮ່, ອົງການປົກຄອງເມືອງ ແລະ ພະແນກການທີ່ກ່ຽວຂ້ອງ ປະສານສົມທົບຈັດຕັ້ງປະຕິບັດວຽກງານວາງແຜນຈັດສັນການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂັ້ນບ້ານ ຕິດພັນກັບການຈັດສັນອາຊີບ ແລະ ພູມລຳເນົາຄົງທີ່ ຢູ່ໃນບ້ານເປົ້າໝາຍທີ່ມີການຂຸດຄົ້ນແຮ່ທາດ ແລະ ສາມາດຢຸດຕິການລັກລອບຂຸດຄົ້ນແຮ່ທາດແບບຊະຊາຍໄດ້ຢ່າງຊຶ່ງເຊິງ; ຫັນມາເຮັດການຜະລິດ ( ການປູກຝັງ ແລະ ລ້ຽງສັດ ) ໃຫ້ຫຼາຍຂຶ້ນໃນແຕ່ລະບ້ານ ເພື່ອເຮັດໃຫ້ປະຊາຊົນບັນດາເຜົ່າມີອາຊີບຄົງທີ່, ມີລາຍຮັບທີ່ໝັ້ນຄົງ ຕິດພັນກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃຫ້ປະກົດຜົນເປັນຈິງ ແລະ ມີຄວາມຍືນຍົງ; ໃຫ້ອົງການປົກຄອງເມືອງ ແລະ ບ້ານ ປະສານສົມທົບກັບບໍລິສັດ ເຮັດສັນຍາສະໜອງຜົນຜະລິດກະສິກຳ ໃຫ້ແກ່ໂຄງການຂຸດຄົ້ນບໍ່ແຮ່ ທີ່ຕັ້ງຢູ່ໃນຂອບເຂດເມືອງ ແລະ ບ້ານຂອງຕົນ;

5) ໃຫ້ພະແນກແຜນການ ແລະ ການລົງທຶນ ເປັນໃຈກາງສົມທົບກັບ ພະແນກພະລັງງານ ແລະ ບໍ່ແຮ່, ພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ສືບຕໍ່ຕິດຕາມ, ກວດກາບັນດາໂຄງການສຳຫຼວດ, ຊອກຄົ້ນ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດຕ່າງໆ ຂອງບັນດາບໍລິສັດ ຕາມການອະນຸຍາດ ຂອງລັດຖະບານ ແລະ ອົງການປົກຄອງແຂວງ ໃນໄລຍະທີ່ຜ່ານມາ; ໃນກໍລະນີຫາກກວດກາພົບເຫັນວ່າໂຄງການໃດ ຫຼື ບໍລິສັດໃດ ຫາກດຳເນີນການສຳຫຼວດ, ຊອກຄົ້ນ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ບໍ່ຖືກຕ້ອງຕາມການອະນຸຍາດ ຫຼື ມີການລະເມີດສັນຍາ ແລະ ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ແມ່ນໃຫ້ອອກຄຳສັ່ງແຈ້ງໂຈະກິດຈະການຊົ່ວຄາວ, ຫຼັງຈາກນັ້ນ, ໃຫ້ພະແນກແຜນການ ແລະ ການລົງທຶນ ແລະ ພະແນກພະລັງງານ ແລະ ບໍ່ແຮ່ ອອກໜັງສືແຈ້ງເຕືອນໃຫ້ບໍລິສັດດັ່ງກ່າວ ເພື່ອໃຫ້ປັບປຸງ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນຢ່າງຮີບດ່ວນ ແລະ ທັນເວລາ ພ້ອມທັງໃຫ້ບໍລິສັດ ສະເໜີແຜນການປັບປຸງແກ້ໄຂບັນຫາຜົນກະທົບທີ່ເກີດຂຶ້ນຢ່າງລະອຽດຊັດເຈນ, ຖ້າຫາກວ່າບໍລິສັດ ບໍ່ສາມາດປັບປຸງແກ້ໄຂບັນຫາ ຕາມວັນເວລາທີ່ກຳນົດໄວ້ ແມ່ນໃຫ້ລາຍງານ ແລະ ນຳສະເໜີຕໍ່ລັດຖະບານ ຄົ້ນຄວ້າພິຈາລະນາ ສັ່ງໂຈະການດຳເນີນໂຄງການ ຫຼື ຍົກເລີກສັນຍາ ຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;

6) ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການສົມທົບກັບ ພະແນກພະລັງງານ ແລະ ບໍ່ແຮ່, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກການທີ່ກ່ຽວຂ້ອງ ກວດກາຄືນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ທີ່ຕິດພັນກັບການຂຸດຄົ້ນ, ຂົນສົ່ງຊັບພະຍາກອນແຮ່ທາດ, ຖ້າຫາກວ່າບໍລິສັດບໍ່ປະຕິບັດຕາມບັນດາມາດຕະການ ທີ່ກຳນົດໄວ້ ໃນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ລະບຽບການຄຸ້ມຄອງເສັ້ນທາງບົກ ແມ່ນໃຫ້ດຳເນີນການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

7) ໃຫ້ພະແນກອຸດສະຫະກຳ ແລະ ການຄ້າ, ພະແນກການເງິນ, ເຈົ້າໜ້າທີ່ພາສີ ແລະ ຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການຕິດຕາມກວດກາ ການນຳເຂົ້າເຄື່ອງຈັກ, ສານເຄມີ, ທາດລະເບີດ, ອຸປະກອນຮັບໃຊ້ອື່ນໆ ທີ່ບໍ່ໄດ້ຮັບ

ອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ທີ່ນຳເຂົ້າມາຜ່ານດ່ານສາກົນ, ດ່ານປະເພນີ ແລະ ວາງຈຳໜ່າຍຢູ່ໃນຫ້າງຮ້ານພາຍໃນແຂວງອັດຕະປື ໃຫ້ປະຕິບັດມາດຕະການ ຕາມກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ ພ້ອມທັງກັກຍຶດວັດຖຸດັ່ງກ່າວໄວ້ເປັນຂອງກາງ ເພື່ອປະກອບສຳນວນດຳເນີນຄະດີຕາມລະບຽບກົດໝາຍ;

8) ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງເມືອງ ແລະ ບ້ານ ໃນການຕິດຕາມ, ກວດກາ ແລະ ແກ້ໄຂບັນຫາການອອກອະນຸຍາດ ຂຸດຄົ້ນຫີນແຮ່-ຊາຍ ຕາມບັນດາສາຍນ້ຳ, ຮ່ອງຫ້ວຍ ແລະ ເປັນເຈົ້າການໃນການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ເພື່ອອັດຊ່ອງວ່າງໃນການສວຍໂອກາດລັກລອບ ຂຸດຄົ້ນແຮ່ຄຳຕົກຂ້ອນ ແລະ ແຮ່ທາດອື່ນ ອັນຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;

9) ໃຫ້ຄະນະສະເພາະກິດ ເປັນເຈົ້າການເຄື່ອນໄຫວຕິດຕາມ, ກວດກາລາດຕະເວນ ຢູ່ໃນຂອບເຂດພື້ນທີ່ໄດ້ຮັບອະນຸຍາດໃນການສຳຫຼວດ, ຂຸດຄົ້ນ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນແຂວງອັດຕະປື; ໃນກໍລະນີກວດກາພົບເຫັນປະຊາຊົນບັນດາເຜົ່າ ແລະ ຊາວຕ່າງປະເທດ ທີ່ກຳລັງດຳເນີນການລັກລອບຂຸດຄົ້ນແຮ່ຄຳ ແລະ ແຮ່ທາດອື່ນໆແບບຊະຊາຍ ແມ່ນຈະໄດ້ຖືກກັກຕົວ ເພື່ອດຳເນີນການສືບສວນ-ສອບສວນ ແລະ ນຳເອົາຜູ້ກ່ຽວ ມອບໃຫ້ອົງການປົກຄອງເມືອງ ແລະ ບ້ານ ປະຕິບັດມາດຕະການຕາມກົດລະບຽບຂອງບ້ານ ແລະ ລະບຽບກົດໝາຍ ຕາມແຕ່ລະກໍລະນີໜັກ ຫຼື ເບົາ ແມ່ນຂຶ້ນກັບຮູບການກະທຳຜິດຂອງຜູ້ກ່ຽວ; ໃນກໍລະນີຜູ້ກັກຕົວ ຫາກເປັນຄົນຕ່າງດ້າວ, ຊາວຕ່າງປະເທດ ແມ່ນໃຫ້ດຳເນີນການສືບສ່ວນ-ສອບສວນຜູ້ກ່ຽວຢ່າງລະອຽດ ເຊັ່ນ: ການນຳໃຊ້ບັດສະປອດ, ການຜ່ານດ່ານເຂົ້າ-ອອກເມືອງ, ການດຳເນີນທຸລະກິດ ແລະ ປະຫວັດການເຄື່ອນໄຫວອື່ນໆ ຂອງຜູ້ກ່ຽວ ແລ້ວດຳເນີນການສືບສວນ-ສອບສວນ ຕາມລະບຽບກົດໝາຍຂອງ ສປປ ລາວ ຢ່າງເຂັ້ມງວດ; ພາຍຫຼັງສຳເລັດການສືບສວນ-ສອບສວນແລ້ວ ແມ່ນມອບໃຫ້ຄະນະສະເພາະກິດ ປະສານງານຫາກົງສູນ ຫຼື ປະສານງານຫາເຈົ້າໜ້າທີ່ຂອງປະເທດຜູ້ກ່ຽວອາໄສຢູ່ ແລ້ວນຳສົ່ງມອບ-ຮັບໃຫ້ເຈົ້າໜ້າທີ່ ຂອງປະເທດຜູ້ກ່ຽວ ສືບຕໍ່ດຳເນີນຄະນະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ;

10) ໃນເວລາຄະນະສະເພາະກິດ ລົງເຄື່ອນໄຫວກວດກາລາດຕະເວນຢູ່ພາກສະໜາມ ໃນກໍລະນີພົບເຫັນແຕ່ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການລັກລອບຂຸດຄົ້ນແຮ່ທາດ (ບໍ່ພົບເຫັນບຸກຄົນ) ໃຫ້ຄົ້ນຄວ້າພິຈາລະນາຢ່າງເດັດຂາດ, ສາມາດຍຶດຊັບສິນດັ່ງກ່າວເປັນຂອງລັດ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເຊັ່ນ: ຮັບໃຊ້ວຽກການຜະລິດກະສິກຳ, ຮັບໃຊ້ກຳລັງປກຊ-ປກສ ມອບໃຫ້ຄະນະພາກສະໜາມທ້ອນໂຮມໄວ້ຢູ່ກອງທະຫານ ຫຼື ຫ້ອງການ ປກສ ປະຈຳກຸ່ມບ້ານ ທີ່ໃກ້ຄຽງແລ້ວຂຶ້ນບັນຊີ ເພື່ອຂໍຄຳເຫັນຊີ້ນຳຈາກຂັ້ນເທິງ; ໃນກໍລະນີມີຄວາມຫຍຸ້ງຍາກໃນການທ້ອນໂຮມ ແລະ ບໍ່ເປັນຜົນປະໂຫຍດ ແມ່ນໃຫ້ທຳລາຍຖິ້ມກັບທີ່ ໂດຍບໍ່ໃຫ້ສາມາດນຳໄປໃຊ້ໄດ້ໃນຄັ້ງຕໍ່ໄປ ແລ້ວຖ່າຍຮູບບັນທຶກໄວ້ເປັນຫຼັກຖານອ້າງອີງ ເພື່ອລາຍງານຕໍ່ຂັ້ນເທິງ;

11) ໃຫ້ພະແນກການ, ອົງການຈັດຕັ້ງທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການປົກຄອງເມືອງ, ບ້ານ ແລະ ທຸກພາກສ່ວນໃນທົ່ວສັງຄົມ ສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ມີສ່ວນຮ່ວມໃນການຕິດຕາມ, ກວດກາ, ລາຍງານສະພາບການລັກລອບຂຸດຄົ້ນແຮ່ທາດທີ່ບໍ່ຖືກຕ້ອງ, ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ແກ່ຄະນະສະເພາະກິດຂັ້ນແຂວງ ໃນຂອບເຂດທົ່ວແຂວງ ຮັບຊາບປົກກະຕິ ເພື່ອດຳເນີນການກວດກາ ແລະ ແກ້ໄຂບັນຫາຢ່າງທັນການ; ໃນກໍລະນີກວດກາພົບເຫັນຢູ່ເມືອງໃດ ຍັງມີການລັກລອບຂຸດຄົ້ນຄຳຕົກຂ້ອນ ແລະ ແຮ່ທາດອື່ນໆ ມອບໃຫ້ອົງການປົກຄອງເມືອງ ແຕ່ງຕັ້ງເຈົ້າໜ້າທີ່ກ່ຽວຂ້ອງເມືອງນັ້ນ ລົງເຄື່ອນໄຫວຕິດຕາມກວດກາ ແລະ ປະຕິບັດມາດຕະການ ຕາມລະບຽບກົດໝາຍ ຢ່າງເຂັ້ມງວດ;

12) ບັນດາບໍລິສັດ ທີ່ໄດ້ຮັບສິດໃນການເຊັນສັນຍາ ( MOU ) ຈາກລັດຖະບານ ແລະ ອົງການປົກຄອງແຂວງໃນການສຳຫຼວດ, ຂຸດຄົ້ນແຮ່ທາດຕ່າງໆ ຢູ່ໃນຂອບເຂດແຂວງອັດຕະປື, ເລີ່ມແຕ່ປີ 2025 ເປັນຕົ້ນໄປ ກ່ອນຈະລົງພາກສະໜາມ ແມ່ນໃຫ້ແຈ້ງບັນຊີລາຍຊື່ບຸກຄົນ (ລະບຸໜ້າທີ່ຕຳແໜ່ງຢ່າງຈະແຈ້ງ), ກົນຈັກ, ພາຫະນະຮັບໃຊ້, ເຄື່ອງບິນຂະໜາດນ້ອຍ (ໂດຣນ), ທາດເຄມີ, ເຄື່ອງມືສື່ສານ ແລະ ສະຖາບັນວິໃຈແຮ່ທາດ ທີ່ເປັນຄູ່ສັນຍາຂອງບໍລິສັດ ແລະ ອື່ນໆ ທີ່ກ່ຽວຂ້ອງ ແຈ້ງໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ເພື່ອສັງລວມ ນຳສະເໜີຕໍ່ພາກສ່ວນທີ່

ກ່ຽວຂ້ອງຄົ້ນຄວ້າພິຈາລະນາຕາມລະບຽບກົດໝາຍ ແລະ ຂັ້ນຄຸ້ມຄອງ ແລ້ວນຳສະເໜີຕໍ່ຂັ້ນເທິງ ຂໍອະນຸຍາດນຳໃຊ້ຢ່າງເປັນທາງການ;

13) ບັນດາພະແນກການ, ອົງການຈັດຕັ້ງທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການປົກຄອງເມືອງ ແລະ ບ້ານ ພ້ອມດ້ວຍບຸກຄົນ, ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ຫ້າມບໍ່ໃຫ້ອຳນວຍຄວາມສະດວກ, ປົກປິດເຊື່ອງອຳຂໍ້ມູນ, ສົມຮູ້ຮ່ວມຄິດ ແລະ ມີສ່ວນຮ່ວມເຂົ້າໃນການລັກລອບຂຸດຄົ້ນແຮ່ທາດແບບຊະຊາຍ ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຢູ່ໃນຂອບເຂດຄຸ້ມຄອງຂອງແຕ່ລະບ້ານ; ຖ້າຫາກວ່າເຈົ້າໜ້າທີ່ສະເພາະກິດ ກວດກາພົບເຫັນ, ຮັບຮູ້ ຫຼື ມີຂໍ້ມູນຫຼັກຖານອ້າງອີງ ແມ່ນຈະໄດ້ດຳເນີນການສືບສວນ-ສອບສວນ ແລະ ດຳເນີນຄະນະດີ ຕາມລະບຽບກົດໝາຍ ຢ່າງເຂັ້ມງວດ;

14) ບັນດາພະແນກການ, ອົງການຈັດຕັ້ງທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການປົກຄອງເມືອງ ແລະ ບ້ານ ພ້ອມດ້ວຍບຸກຄົນ, ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ທີ່ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການສະໜອງຂໍ້ມູນ ແລະ ລາຍງານສະພາບການລັກລອບຂຸດຄົ້ນແຮ່ທາດແບບຊະຊາຍ, ບໍ່ຖືກຕ້ອງຕາມລະບຽບກົດໝາຍ ໃຫ້ແກ່ເຈົ້າໜ້າທີ່ຄະນະສະເພາະກິດໃນຂອບເຂດທົ່ວແຂວງ ຮັບຊາບຢ່າງເປັນປົກກະຕິ ຈະໄດ້ຮັບການຄົ້ນຄວ້າປະຕິບັດນະໂຍບາຍຍ້ອງຍໍ ຫຼື ບຳເນັດຕາມລະບຽບການທີ່ໄດ້ກຳນົດໄວ້;

5. ໃຫ້ບັນດາພະແນກການ, ອົງການຈັດຕັ້ງທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການປົກຄອງເມືອງ 5 ເມືອງ, ອົງການປົກຄອງບ້ານໃນທົ່ວແຂວງ ແລະ ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແລະ ອົງການປົກຄອງແຂວງ ເປັນເຈົ້າການຄົ້ນຄວ້າກຳແໜ້ນຢ່າງເລິກເຊິ່ງ ຕໍ່ເນື້ອໃນຄຳສັ່ງສະບັບນີ້ ຕາມຄວາມຮັບຜິດຊອບຂອງຕົນຢ່າງຮີບດ່ວນ ແລະ ພ້ອມກັນຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ໃຫ້ເລິກເຊິ່ງທົ່ວເຖິງ ໃນແຕ່ລະກຸ່ມເປົ້າໝາຍ;

6. ຄະນະສະເພາະກິດ ທີ່ຮັບຜິດຊອບຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ມີໜ້າທີ່ລາຍງານຕໍ່ເຈົ້າແຂວງ ແລະ ຄະນະສະເພາະກິດຂັ້ນສູນກາງ ຢ່າງເປັນປົກະຕິ ຕາມກົນໄກປະສານງານທີ່ໄດ້ກຳນົດໄວ້ ໃນຄຳສັ່ງເລກທີ 06/ນຍ;

7. ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ທີ່ໄດ້ປະກາດໃຊ້ໃນໄລຍະຜ່ານມາ, ຊຶ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ, ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ;

ເຈົ້າແຂວງ

ແຂວງອັດຕະປື
ເຈົ້າແຂວງ

ທະນູໄຊ ບັນຊາລິດ

**ບ່ອນນຳສົ່ງ:**

- ຫ້ອງວ່າການແຂວງ 1 ສະບັບ;
- ຂະແໜງການກ່ຽວຂ້ອງ ແຂວງ, ເມືອງ ບ່ອນລະ 1 ສະບັບ;
- ສຳເນົາ 2 ສະບັບ.